**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 64 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 22 ມີນາ 2022

## ແຈ້ງການ

**ເຖິງ: ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ**

**ເລື່ອງ: ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວຂອງວິສາຫະກິດ ຈຳນວນ 6 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ ກະຊວງການເງິນ**

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເລກທີ 76/ຈທວ, ລົງວັນທີ 18 ມີນາ 2021;
- ອີງຕາມ ໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 0879/ກສອ, ລົງວັນທີ 11 ມີນາ 2022.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຂອງວິສາຫະກິດ ຈຳນວນ 6 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 0879/ກສອ, ລົງວັນທີ 11 ມີນາ 2022 ເຮັດໃຫ້ວິສາຫະກິດດັ່ງກ່າວສາມາດສືບຕໍ່ເຄື່ອນໄຫວໄດ້ ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ ເປັນຕົ້ນໄປ;

2. ສຳລັບ ວິສາຫະກິດ ທີ່ຍັງຖືກມາດຕະການ ຕາມໜັງສືແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ສະບັບເລກທີ 76/ຈທວ ລົງວັນທີ 18 ມີນາ 2021 ແມ່ນໃຫ້ສືບຕໍ່ເຂົ້າໄປພົວພັນກັບເຈົ້າໜ້າທີ່ສ່ວຍສາອາກອນ, ກົມສ່ວຍສາອາກອນ, ກະຊວງການເງິນ **ກ່ອນວັນທີ 28 ເມສາ 2022** ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງສ່ວຍສາອາກອນ. ຖ້າຫາກກາຍກຳນົດເວລາຂ້າງເທິງນີ້ ວິສາຫະກິດດັ່ງກ່າວ ຈະຖືກພິຈາລະນາແຈ້ງໂຈະການເຄື່ອນໄຫວທຸລະກິດ ຖາວອນ;

3. ຈຳນວນ ວິສາຫະກິດທີ່ສືບຕໍ່ໂຈະ ແລະ ຍົກເລີກໂຈະ ການເຄື່ອນໄຫວທຸລະກິດຊົ່ວຄາວ ມີດັ່ງນີ້:

| ຈຳນວນແຈ້ງໂຈະຊົ່ວຄາວທັງໝົດ | ຍົກເລີກຜ່ານມາ | ຍົກເລີກຄັ້ງນີ້ | ຈຳນວນທີ່ຍັງເຫຼືອປັດຈຸບັນ |
|---|---|---|---|
| 709 ຫົວໜ່ວຍ | 127 ຫົວໜ່ວຍ | 6 ຫົວໜ່ວຍ | 576 ຫົວໜ່ວຍ |

ນອກນີ້ທ່ານຍັງສາມາດກວດສອບ ໄດ້ຕາມຄິວອາໂຄດ (QR Code) ຄັດຕິດແຈ້ງການສະບັບນີ້ ຫຼື ໂດຍຜ່ານເວັບໄຊ້ WWW.NED.MOIC.GOV.LA ຫຼື Facebook ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

**ເຈົ້າໜ້າທີ່ທະບຽນວິສາຫະກິດ**

ອະພິສິດ ແສງສຸລິວົງ

709 ສືບຕໍ່ 15-3-2022
(ສືບຕໍ່ໂຈະຊົ່ວຄາວ)

709 ຍົກເລີກ 15-3-2022
(ຍົກເລີກໂຈະຊົ່ວຄາວ)

ບ່ອນສົ່ງ:
- ກົມສ່ວຍສາອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ 1 ສະບັບ;
- ວິສາຫະກິດທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມສ່ວຍສາອາກອນ

0879

ເລກທີ.......ກສອ

ນະຄອນຫຼວງວຽງຈັນວັນທີ...11 MAR 2022

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ຂາເຂົ້າ ເລກທີ 0772
ວັນທີ 14.03.22

## ໜັງສືສະເໜີ

ຮຽນ : ທ່ານຫົວໜ້າ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລື່ອງ: ພິຈາລະນາຍົກເລີກການແຈ້ງໂຈະການເຄື່ອນໄຫວທຸລະກິດ

- ອີງຕາມ ແຈ້ງການສະບັບເລກທີ 0489/ຫກງ, ລົງວັນທີ 05 ມີນາ 2019 ກ່ຽວກັບການອອກເລກປະຈຳຕົວຜູ້ເສຍອາກອນ (TIN);
- ອີງຕາມ ການແຈ້ງໂຈະການເຄື່ອນໄຫວທຸລະກິດ ສະບັບເລກທີ 76/ຈທວ.ທຄວ, ລົງວັນທີ 18 ມີນາ 2021;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລືຄັ້ງວັນທີ 09 ມີນາ 2021, ລະຫວ່າງກົມສ່ວຍສາອາກອນ ແລະ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.

ກົມສ່ວຍສາອາກອນ ຂໍຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາຍົກເລີກການແຈ້ງໂຈະການເຄື່ອນໄຫວທຸລະກິດ ດັ່ງລຸ່ມນີ້:

| ຈຳນວນແຈ້ງໂຈະທັງໝົດ | ຍົກເລີກຜ່ານມາ | ສະເໜີຍົກເລີກຄັ້ງນີ້ | ຈຳນວນຍັງເຫຼືອ |
|---|---|---|---|
| 709 | 127 | 6 | 576 |

ບັນດາຫົວໜ່ວຍທຸລະກິດຂ້າງເທິງ ໄດ້ເຂົ້າມາພົວພັນ ນຳເຈົ້າໜ້າທີ່ສ່ວຍສາອາກອນ ເພື່ອຂໍສືບຕໍ່ດຳເນີນການເຄື່ອນໄຫວທຸລະກິດ ແລະ ປະຕິບັດພັນທະອາກອນ ຕາມກົດໝາຍກຳນົດ, ລາຍລະອຽດມີບັນດາຫົວໜ່ວຍດັ່ງນີ້:

| ລ/ດ | ວັນທີ່ເຂົ້າມາພົວພັນ | ຊື່ວິສາຫະກິດ | ເລກປະຈຳຕົວຜູ້ເສຍອາກອນ | ເລກລະຫັດວິສາຫະກິດ | ທະບຽນວິສາຫະກິດ | ວັນທີ | ທຶນຈົດທະບຽນ |
|---|---|---|---|---|---|---|---|
| 1 | 17/02/2022 | ບໍລິສັດ ແຮນດີ ຈຳກັດ | 164014672-000 | 01-00023721 | 0302/ຈທວ | 18/02/2020 | 100,000,000 |
| 2 | 02/03/2022 | ບໍລິສັດ ວຽງຈັນ ພັດທະນາທຳມະຊາດ ຈຳກັດ | 054085828-000 | 01-00022273 | 0613/ຈທວ | 25/04/2019 | 2,000,000,000 |
| 3 | 03/03/2022 | ບໍລິສັດ ພອນປະເສີດ ຂົນສົ່ງ ຂາເຂົ້າ-ຂາອອກ ການຄ້າ ຈຳກັດຜູ້ດຽວ | 270062862-000 | 01-00022737 | 1352/ຈທວ | 15/08/2019 | 10,000,000,000 |
| 4 | 03/03/2022 | ບໍລິສັດ ສາຄອນ ສົ່ງເສີມກະສິກຳ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ | 246566585-000 | 01-00022739 | 1356/ຈທວ | 15/08/2019 | 10,000,000,000 |
| 5 | 03/03/2022 | ບໍລິສັດ ອາທິເອັສ ນຳເຂົ້າ-ສົ່ງອອກ ຈຳກັດຜູ້ດຽວ | 557745832-000 | 01-00024164 | 1005/ຈທວ | 15/07/2020 | 500,000,000 |
| 6 | 07/03/2022 | ບໍລິສັດ ຫລວງໃຫຍ່ອຸດສາຫະກຳ ຈຳກັດຜູ້ດຽວ | 781602455-000 | 01-00023655 | 0179/ຈທວ | 28/01/2022 | 3,000,000,000 |

Scanned with CamScanner

ເພື່ອເຮັດໃຫ້ບັນດາຫົວໜ່ວຍທຸລະກິດດັ່ງກ່າວສາມາດເຄື່ອນໄຫວທຸລະກິດໄດ້ຢ່າງຖືກຕ້ອງ, ສອດຄ່ອງຕາມກົດໝາຍ, ຈຶ່ງສະເໜີມາຍັງທ່ານພິຈາລະນາຍົກເລີກການໂຈະການເຄື່ອນໄຫວທຸລະກິດ ຕາມລະບຽບການ.

ສ່ວນຫົວໜ່ວຍທຸລະກິດຈຳນວນ 576 ຫົວໜ່ວຍ ທີ່ຍັງບໍ່ທັນເຂົ້າມາພົວພັນນຳຂະແໜງສ່ວຍສາອາກອນສະເໜີໃຫ້ສືບຕໍ່ໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອ ພິຈາລະນາ ຕາມເຫັນສົມຄວນດ້ວຍ.

**ຫົວໜ້າກົມ**

ກະຊວງການເງິນ ກົມສ່ວຍສາອາກອນ

ບຸນປະເສີດ ສີກຸນລະບຸດ

Scanned with CamScanner